ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ: 557/ກຕຂ

ນະຄອນຫຼວງວຽງຈັນ, ວັນທີ: 26 ເມສາ 2017

# ຄຳແນະນຳ

## ຂັ້ນຕອນກະກຽມກ່ອນຕິດຕັ້ງລະບົບການໂອນເງິນແບບທັນທີ (RTGS)

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 600/ທຫລ, ລົງວັນທີ 12 ກໍລະກົດ 2013.
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນແບບທັນທີ (RTGS) ສະບັບເລກທີ 531/ທຫລ, ລົງວັນທີ 04/07/2016.

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ແມ່ນ ຜັນຂະຫຍາຍ ແລະ ແນະນຳຂັ້ນຕອນການກະກຽມເອກະສານ, ບຸກຄະລາກອນ ແລະ ອຸປະກອນ ກ່ອນເຂົ້າເປັນຜູ້ໃຊ້ບໍລິການ ເພື່ອຕິດຕັ້ງລະບົບການໂອນເງິນແບບທັນທີ (RTGS: Real Time Gross Settlement) ໃນບາງມາດຕາຂອງຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນແບບທັນທີ ສະບັບເລກທີ 531/ທຫລ, ລົງວັນທີ 04/07/2016, ແນ່ໃສ່ການຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ສອດຄ່ອງກັບການລົງຕິດຕັ້ງລະບົບຂອງຄະນະ ທຫລ ໃຫ້ບັນລຸຜົນ ແລະ ມີປະສິດທິພາບ.

### 2. ຂັ້ນຕອນການກະກຽມ

ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ໃຫ້ເປັນຜູ້ໃຊ້ບໍລິການລະບົບການໂອນເງິນແບບທັນທີ ຕ້ອງກະກຽມເງື່ອນໄຂດັ່ງນີ້:

#### 2.1 ດ້ານເອກະສານ

ການກະກຽມທາງດ້ານເອກະສານຄວນປະຕິບັດດັ່ງນີ້:

- ຍື່ນໜັງສືສະເໜີ ຂໍເປີດບັນຊີຊຳລະ ( Settlement Account ) ທີ່ກົມບໍລິການ ທະນາຄານແຫ່ງ ສປປ ລາວ;
- ຍື່ນໜັງສືສະເໜີຂໍເປັນຜູ້ໃຊ້ບໍລິການ ທີ່ກົມເຕັກໂນໂລຊີຂໍ້ມູນຂ່າວສານ ທະນະຄານ ແຫ່ງ ສປປ ລາວ ຕາມແບບຟອມ 1 ທີ່ກຳນົດໄວ້ໃນເວັບໄຊ ຂອງ ທຫລ, ພ້ອມທັງແຈ້ງ ລະຫັດ SWIFT (SWIFT

ວິສາຫະກິດ, ສຳເນົາເອກະສານຢັ້ງຢືນກ່ຽວກັບການເປີດບັນຊີຊຳລະ (Settlement Account), ປຶດບັນທຶກການເຊື່ອມຕໍ່ເຄືອຂ່າຍ ລະຫວ່າງ ທຫລ ກັບພາກສ່ວນທີ່ສະເໜີ);

2.2 ດ້ານບຸກຄະລາກອນ.

ແຕ່ງຕັ້ງ ພະນັກງານ ຜູ້ຮັບຜິດຊອບລະບົບ ດັ່ງນີ້:

- ຜູ້ລົງບັນຊີ ຫຼື ພະນັກງານບັນຊີ (Operator)
- ຜູ້ກວດກາ ຫຼື ຜູ້ອານຸມັດ (Controller)
- ຜູ້ດູແລລະບົບ ຫຼື ພະນັກງານໄອທີ ( IT )
  (ຕາມແບບຟອມ 2)

2.3 ດ້ານອຸປະກອນ.

2.3. 1 ການເຊື່ອມຕໍ່ເຄືອຂ່າຍ (Network)

ຜູ້ສະເໜີຕ້ອງຮັບປະກັນວ່າຕົນໄດ້ເຊື່ອມຕໍ່ເຄືອຂ່າຍຄອມພິວເຕີ ທຫລ ( BOL-Net) ໂດຍປະຕິບັດຕາມລະບຽບວ່າດ້ວຍ ການຄຸ້ມຄອງລະບົບເຄືອຂ່າຍຄອມພິວເຕີທີ່ເຊື່ອມຕໍ່ເຄືອຂ່າຍ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ ທະນາຄານແຫ່ງ ສປປ ລາວ ວາງອອກແຕ່ລະໄລຍະ.

2.3.2 ອຸປະກອນຄອມພິວເຕີ ແລະ ໂປຣແກຣມ

- ຄອມພິວເຕີ 02 ໜ່ວຍ (ສຳລັບ ຜູ້ກວດກາ ແລະ ຜູ້ລົງບັນຊີ ) ທີ່ ໃຊ້ສະເພາະລະບົບ RTGS ເທົ່ານັ້ນ;
- User ຂອງຄອມພິວເຕີໜ່ວຍດັ່ງກ່າວຕ້ອງມີສິດທິເປັນ Administrator ຫຼື ທຽບເທົ່າ;
- ໜ່ວຍປະມວນຜົນຂອງຄອມພິວເຕີ (CPU) ທີ່ໃຊ້ຢ່າງໜ້ອຍຕ້ອງເປັນ Pentium 4, 3.2 GHz ຫຼື ສູງກວ່າ ເພື່ອເຮັດໃຫ້ການປະມວນຜົນຂອງລະບົບໄດ້ໄວ ແລະ ມີປະສິດທິພາບ;
- ໜ່ວຍຄວາມຈຳພາຍໃນ (RAM) 2 GB ຂຶ້ນໄປ;
- ຂະໜາດໃນການເກັບຂໍ້ມູນ (Hard disk) ຊ່ອງ c ຫຼື ຊ່ອງລົງລະບົບປະຕິບັດການ ຕ້ອງມີເນື້ອທີ່ຢ່າງໜ້ອຍ 80 GB ຂຶ້ນໄປ (ຂະໜາດແນະນຳ "100 GB");
- ລະບົບປະຕິບັດການ Windows XP service pack 3 (32 Bit), Windows 7 (32 Bit) ຫຼື Microsoft Windows 8 (32bit) ເຊິ່ງກົມເຕັກໂນໂລຊີຂໍ້ມູນຂ່າວສານຈະແຈ້ງໃຫ້ຊາບພາຍຫຼັງ;

3 ການກວດກາຄວາມຖືກຕ້ອງດ້ານເຕັກນິກການເຊື່ອມຕໍ່.

ຫຼັງຈາກກະກຽມອຸປະກອນຄອມພິວເຕີ ຕາມລາຍລະອຽດຂ້າງເທິງແລ້ວ, ຂັ້ນຕອນຕໍ່ໄປແມ່ນກວດດ້ານເຕັກໃນການເຊື່ອມຕໍ່ ກັບລະບົບເຄືອຂ່າຍຂອງ ທຫລ (BOL-Net) ເຊິ່ງມີຂັ້ນຕອນດັ່ງນີ້:

- ເປີດອະນຸຍາດ Port 33334 ແລະ 6389 ໃນ firewall, ເພີ່ມ IP 172.16.2.1, 172.16.2.2, 172.16.2.3 ແລະ IP 172.16.102.1, 172.16.102.2, 172.16.102.3 ໃນລະບົບປ້ອງກັນຄວາມປອດໄພຂອງເຄືອຂ່າຍ (firewall).

3.3 ໃຊ້ຄຳສັ່ງ telnet ໃນ command line ເພື່ອກວດເບິ່ງພອດ 33334 ແລະ 6389 ທີ່ລະບົບ RTGS ໃຊ້ເຊື່ອມຫາຜູ້ໃຊ້ບໍລິການ, ໂດຍເຂົ້າໄປທີ່: Start → Run → ພິມ telnet 172.16.2.1 ຕາມດ້ວຍ Port ທີ່ຕ້ອງການເຊື່ອມຕໍ່ (33334 ແລະ 3689).

<u>ຕົວຢ່າງ:</u> telnet_172.16.2.1_33334 ( " _ " ຄວາມໝາຍແມ່ນຍະວ່າງ 1 ບັນທັດ).




ຖ້າ Port ດັ່ງກ່າວສາມາດເຊື່ອມຕໍ່ກັບລະບົບ RTGS ໄດ້ແມ່ນຈະມີໜ້າຈໍສີດຳວ່າງເປົ່າ ດັ່ງຮູບລຸ່ມນີ້:




ຖ້າຫາກບໍ່ສາມາດເຊື່ອມຕໍ່ໄດ້ ແມ່ນໃຫ້ກັບໄປເບິ່ງລະບົບປ້ອງກັນຄວາມປອດໄພຂອງເຄືອຂ່າຍ (firewall) ແລະ ອະນຸຍາດໃຫ້ພອດ 33334 ແລະ 6389 ເພື່ອໃຫ້ສາມາດເຊື່ອມຕໍ່ກັບລະບົບ RTGS ໄດ້.

ພາຍຫຼັງສຳເລັດການກະກຽມຕາມຂັ້ນຕອນຕາມລາຍລະອຽດຂ້າງເທິງແລ້ວແມ່ນໃຫ້ແຈ້ງມາຍັງກົມເຕັກໂນໂລຊີຂໍ້ມູນຂ່າວສານເພື່ອດຳເນີນການລົງຕິດຕັ້ງລະບົບໃນຂັ້ນຕໍ່ໄປ.

ດັ່ງນັ້ນ, ຈຶ່ງເຮັດບົດແນະນຳສະບັບນີ້ຂຶ້ນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ປ່ຽນແທນບົດແນະນຳກ່ຽວກັບຂັ້ນຕອນການກະກຽມຕິດຕັ້ງ ລະບົບຊຳລະເງິນມູນຄ່າສູງແບບທັນທີ (RTGS) ສະບັບເລກທີ 1009/ກຕຂ, ລົງວັນທີ 20/8/2014.

ຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ

ໄຊ່ແກ້ວ ຫຼວງສີວິໄລ

แบบฟอม 1

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານ ..............................

ເລກທີ:................/

ນະຄອນຫຼວງວຽງຈັນ,ວັນທີ:..................

**ຮ່າງ**

**ໃບສະເໜີ**

**ເຖິງ:** ທ່ານ ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ, ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ຂໍເຂົ້າເປັນຜູ້ໃຊ້ບໍລິການ ລະບົບການໂອນເງິນແບບທັນທີ.

- ອີງຕາມ ໃບອະນຸຍາດສ້າງຕັ້ງ ທະນາຄານ ສະບັບເລກທີ ......................, ລົງວັນທີ: .............
- ອີງຕາມ ......................................................................................................

ທະນາຄານ ......................................................... ຂໍຖືເປັນກຽດ ຮຽນສະເໜີມາຍັງທ່ານ ເພື່ອຂໍເປັນຜູ້ໃຊ້ບໍລິການ ລະບົບການໂອນເງິນແບບທັນທີ ພ້ອມທັງການເຝິກອົບຮົມການນຳໃຊ້ລະບົບດັ່ງກ່າວໃຫ້ພະນັກງານຜູ້ຮັບຜິດຊອບລະບົບທີ່ຖືກແຕ່ງຕັ້ງ ເພື່ອຮັບປະກັນການການນຳໃຊ້ລະບົບ ເຊິ່ງຂໍ້ມູນພື້ນຖານມີດັ່ງນີ້:

1. ຊື່ທະນາຄານເປັນພາສາອັງກິດ:..............................................................
2. ເລກບັນຊີຊຳລະ (Settlement Account):
   ກີບ (LAK): ..............................................................
   ໂດລາ (USD): ........................................................ (ຖ້າມີ)
   ບາດ (THB): ......................................................... (ຖ້າມີ)
3. ລະຫັດ SWIFT:.......................................................

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານພິຈາລະນາຕາມເຫັນສົມຄວນດ້ວຍ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖື,

**ຜູ້ອຳນວຍການ**

<u>ເອກະສານຕິດຄັດ</u>

1. ສຳເນົາໃບທະບຽນວິສາຫະກິດ
2. ສຳເນົາໃບອະນຸຍາດສ້າງຕັ້ງທະນາຄານຖາວອນ
3. ສຳເນົາເອກະສານບົດບັນທຶກການເຊື່ອມຕໍ່ ເຄືອຂ່າຍຂອງ ທະນາຄານແຫ່ງ ສປປ ລາວ

ແບບຟອມ 2

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານ ............................

ເລກທີ:................/

ນະຄອນຫຼວງວຽງຈັນ,ວັນທີ:..................

ຮ່າງ

**ໃບແຕ່ງຕັ້ງຜູ້ຮັບຜິດຊອບ**

ລະບົບການໂອນເງິນແບບທັນທີ

- ອີງຕາມ ໃບອະນຸຍາດສ້າງຕັ້ງ ທະນາຄານ ສະບັບເລກທີ ......................, ລົງວັນທີ: ..................
- ອີງຕາມການຄົ້ນຄວ້າຂອງຄະນະຮັບຜິດຊອບການຈັດຕັ້ງ ແລະ ພະນັກງານ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ.

ຜູ້ອຳນວຍການທະນາຄານ.......................................................................ຕົກລົງ:

ມາດຕາ 1 ແຕ່ງຕັ້ງ

1. ທ່ານ:..........................................................................ເບີໂທ:............
   ອີເມວ:................................................ຮັບຜິດຊອບເປັນຜູ້ລົງບັນຊີ.
2. ທ່ານ:..........................................................................ເບີໂທ:............
   ອີເມວ:................................................ຮັບຜິດຊອບເປັນຜູ້ກວດກາ ແລະ ອະນຸມັດ.
3. ທ່ານ:..........................................................................ເບີໂທ:............
   ອີເມວ:............................................ຮັບຜິດຊອບດ້ານເຕັກນິກ ແລະ ໄອທີ.

ມາດຕາ 2 ທຸກພາກສ່ວນພາຍໃນທະນາຄານ ພ້ອມດ້ວຍບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ເປັນຢ່າງດີ.

ມາດຕາ 3 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການ**